# ການກັ່ນຕອງ ແລະ ສະກັດກັ້ນຂໍ້ມູນແມ່ນຫຍັງ?

### ແລະ ໄດ້ນໍາໃຊ້ການກັ່ນຕອງ ແລະ ການສະກັດກັ້ນຂໍ້ມູນເຂົ້າໃນການຂັດຂວາງສິ່ງທີ່ສື່ເຖິງການທາລຸນທາງເພດເດັກແນວໃດ

## ການກັ່ນຕອງ ແລະ ສະກັດກັ້ນຂໍ້ມູນນໍາໃຊ້ແນວໃດ?

ຜູ້ໃຫ້ບໍລິການອິນເຕີເນັດ ແລະ ຜູ້ໃຫ້ບໍລິການຕ່າງໆທາງອິນເຕີເນັດແມ່ນພະຍາຍາມສະກັດກັ້ນຜູ້ຊົມໃຊ້ອິນເຕີເນັດບໍ່ໃຫ້ສາມາດເຂົ້າເຖິງທີ່ຢູ່ເວັບໄຊ ທີ່ປະກອບດ້ວຍຮູບພາບທີ່ທາລຸນທາງເພດເດັກ. ອີກຢ່າງໜຶ່ງ ພວກເຂົາຕ້ອງການທີ່ຈະສະກັດກັ້ນຜູ້ຊົມໃຊ້ອິນເຕີເນັດຂອງພວກເຂົາ ຈາກການສົ່ງ ຫຼື ອັບໂຫຼດ, ແລກປ່ຽນ ຫຼື ເກັບຮູບພາບ ຫຼື ວິດີໂອທີ່ທາລຸນທາງເພດເດັກ. ເພື່ອທີ່ຈະສະກັດກັ້ນສິ່ງດັ່ງກ່າວໄດ້ ພວກເຂົານໍາໃຊ້ເຕັກໂນໂລຊີເພື່ອການກັ່ນຕອງ ແລະ ສະກັດກັ້ນຂໍ້ມູນ.

ທີ່ຢູ່ຂອງເວັບໄຊທີ່ຮູ້ວ່າປະກອບດ້ວຍສິ່ງທີ່ກ່ຽວກັບການທາລຸນທາງເພດເດັກແມ່ນໄດ້ກໍານົດໄວ້ໃນລາຍການເວັບໄຊທີ່ສົ່ງໂດຍກົງຫາບັນດາບໍລິສັດ ທີ່ອາດຈະລວມເອົາລາຍການດັ່ງກ່າວເຂົ້າໃນນະໂຍບາຍດ້ານຄວາມປອດໄພສໍາລັບການບໍລິການຂອງພວກເຂົາ. ຄວາມພະຍາຍາມເຂົ້າເຖິງເວັບໄຊຕາມທີ່ໄດ້ລະບຸໄວ້ໃນລາຍການດັ່ງກ່າວຈະຖືກກັ່ນຕອງ ຫຼື ສະກັດກັ້ນ. ເຊິ່ງອົງການຈັດຕັ້ງ ເຊັ່ນ: ໜ່ວຍງານສາຍດ່ວນ ແລະ ເຈົ້າໜ້າທີ່ຕໍາຫຼວດ (ເປັນຕົ້ນແມ່ນຕໍາຫຼວດສາກົນ ຫຼື INTERPOL) ເປັນຜູ້ຮວບຮວມ ແລະ ສ້າງລາຍການເວັບໄຊດັ່ງກ່າວຂຶ້ນ. ມີຫຼາຍປະເທດໄດ້ມີກົດໝາຍທີ່ຮຽກຮ້ອງໃຫ້ຜູ້ໃຫ້ບໍລິການອິນເຕີເນັດສະກັດກັ້ນສິ່ງທີ່ສື່ເຖິງການລຸນທາງເພດເດັກບໍ່ໃຫ້ອອກສູ່ສາຍຕາສາທາລະນະຊົນ.

ຖ້າເຈົ້າໜ້າທີ່ຕໍາຫຼວດຮັບຮູ້ຮູບພາບໃດໜຶ່ງແລ້ວ ຈະນໍາໃຊ້ເຕັກໂນໂລຊີການໃຊ້ລະຫັດແທນຕົວເປັນຕົ້ນແມ່ນລະບົບວິເຄາະຮູບພາບ* ຊຶ່ງສາມາດສ້າງລະຫັດແທນຕົວ* ຫຼື ລາຍພິມດີຈີຕອລຂອງຮູບພາບ. ເຊິ່ງລະຫັດແທນຕົວດັ່ງກ່າວຈະຖືກບັນທຶກໄວ້ໃນຖານຂໍ້ມູນ ແລະ ຈາກນັ້ນລະບົບຈະສາມາດລະບຸຮູບພາບທີ່ຜູ້ຊົມໃຊ້ພະຍາຍາມອັບໂຫຼດ, ດາວໂຫຼດ, ແລກປ່ຽນ ຫຼື ເກັບໄວ້ໃນອຸປະກອນຂອງພວກເຂົາໄດ້.




### ຂໍ້ມູນຕົວຈິງ

- ເປົ້າໝາຍຂອງການກັ່ນຕອງ ແລະ ສະກັດກັ້ນຂໍ້ມູນແມ່ນເພື່ອຈໍາກັດການເຂົ້າເຖິງເນື້ອໃນສະເພາະທາງອິນເຕີເນັດ
- ການກັ່ນຕອງ ແລະ ສະກັດກັ້ນຂໍ້ມູນຈະສົ່ງຜົນກະທົບພຽງແຕ່ ສ່ວນໃດໜຶ່ງຂອງຂໍ້ມູນທີ່ມີໃນດັດຊະນີທາງອິນເຕີເນັດທີ່ກໍານົດໂດຍໂປຣແກຣມຄົ້ນຫາຂໍ້ມູນ (Search engine)
- ການກັ່ນຕອງ ແລະ ສະກັດກັ້ນຂໍ້ມູນແມ່ນຂຶ້ນກັບ: ຄໍາສັບຫຼັກ (Keywords) (ເປັນຕົ້ນແມ່ນຄໍາສັບທີ່ໃຊ້ເພື່ອການຄົ້ນຫາ); URLs ທີ່ຖືກເກືອດຫ້າມ (ເປັນຕົ້ນແມນເວັບໄຊ); ແລະ ລະຫັດແທນຕົວ.

### ຄໍາເຕືອນໃຫ້ລະວັງ

ຕົວກັ່ນຕອງບໍ່ສາມາດໄຈ້ແຍກລະຫວ່າງເວັບໄຊທີ່ປະກອບດ້ວຍເນື້ອໃນທີ່ຜິດກົດໝາຍ ແລະ ເວັບໄຊທີ່ບໍ່ມີເນື້ອໃນດັ່ງກ່າວໄດ້ເລື້ອຍປານໃດ; ຊຶ່ງເຮັດໃຫ້ມີຄວາມສ່ຽງທີ່ເນື້ອໃນຈະຖືກສະກັດກັ້ນຢ່າງບໍ່ຖືກຕ້ອງ (ການສະກັດກັ້ນຂໍ້ມູນເກີນຄວາມຈໍາເປັນ)

*ເບິ່ງເອກະສານຂໍ້ມູນຕົວຈິງ - ລະຫັດແທນຕົວແມ່ນຫຍັງ? ລະບົບວິເຄາະຮູບພາບແມ່ນຫຍັງ?

## ການກັ່ນຕອງ ແລະ ການສະກັດກັ້ນສິ່ງທີ່ສື່ເຖິງການທາລຸນທາງເພດເດັກ

ຜົນໄດ້ຮັບ ແລະ ຈຸດປະສົງທີ່ແທ້ຈິງຂອງເຕັກໂນໂລຊີກັ່ນຕອງ ແລະ ສະກັດກັ້ນຂໍ້ມູນແມ່ນເພື່ອຫຼຸດຜ່ອນ ຫຼື ຈໍາກັດການເຂົ້າເຖິງສິ່ງທີ່ສື່ເຖິງການທາລຸນທາງເພດເດັກທາງອິນເຕີເນັດ. ເຕັກໂນໂລຊີດັ່ງກ່າວຈະຊ່ວຍເຮັດໃຫ້ການເຂົ້າອິນເຕີເນັດມີຄວາມປອດໄພຂຶ້ນ ໂດຍການສະກັດກັ້ນການໄດ້ຮັບເນື້ອໃນທີ່ບໍ່ຕ້ອງການ ແລະ ຜິດກົດໝາຍດັ່ງກ່າວ. ນອກຈາກນັ້ນ ຍັງຂັດຂວາງຜູ້ລະເມີດທີ່ພະຍາຍາມເຂົ້າເຖິງ ແລະ ສົ່ງສິ່ງທີ່ສື່ເຖິງການທາລຸນທາງເພດເດັກ.

ການກັ່ນຕອງ ແລະ ການສະກັດກັ້ນຂໍ້ມູນຍັງມີປະໂຫຍດສໍາຄັນສໍາລັບຜູ້ຖືກເຄາະຮ້າຍທີ່ຢູ່ໃນຮູບພາບ. ໂດຍການເຮັດໃຫ້ບໍ່ສາມາດ ເຂົ້າເຖິງຮູບພາບດັ່ງກ່າວໄດ້, ກົນໄກການກັ່ນຕອງ ແລະ ສະກັດກັ້ນຈະປົກປ້ອງຄວາມເປັນສ່ວນຕົວ, ກຽດສັກສີຂອງຜູ້ຖືກເຄາະຮ້າຍ ແລະ ເປັນການຫຼຸດຜ່ອນຄວາມເປັນໄປໄດ້ທີ່ຜູ້ຖືກເຄາະຮ້າຍຈະໄດ້ຮັບຜົນກະທົບເພີ່ມເຕີມຈາກຮູບພາບດັ່ງກ່າວ.

ເອກະສານຂໍ້ມູນຕົວຈິງສະບັບນີ້ໄດ້ຮັບການພັດທະນາໂດຍອົງການ ECPAT ສາກົນ. ສະໜັບສະໜູນການແປພາສາ ແລະ ການຜະລິດໂດຍອົງການສປຊ ສໍາລັບເດັກ

unicef unite for children